ເປັນຫຍັງຂ້າພະເຈົ້າຈຶ່ງຄວນໄດ້ຮັບການສັກຢາວັກຊີນປ້ອງກັນພະຍາດ COVID-19?

ພະຍາດ ໂຄໂຣນາໄວຣັດ (COVID-19) ແມ່ນພະຍາດໃໝ່, ຕ້ອງໄດ້ສັກຢາວັກຊີນ ໃໝ່. ມັນເປັນເລື່ອງທີ່ດີທີ່ມີຄຳຖາມກ່ຽວກັບວ່າ ຢາວັກຊີນໃຊ້ໄດ້ຜົນດີແນວໃດ, ວ່າມັນຈະປອດໄພສຳລັບທ່ານບໍ່ ແລະ ການໄດ້ຮັບມັນນັ້ນງ່າຍບໍ.

ບັນດາຢາວັກຊີນປ້ອງກັນພະຍາດ COVID-19 ປ້ອງກັນໄດ້ຊີວິດ

ຢາວັກຊີນປ້ອງກັນພະຍາດ COVID-19 ທັງສາມລຸ້ນທີ່ໄດ້ຮັບການອະນຸມັດສຳລັບການນຳໃຊ້ໃນ ສະຫະລັດອາເມລິກາ—Pfizer-BioNTech, Moderna, ແລະ Johnson & Johnson (Janssen) —ນຳໃຊ້ໄດ້ຜົນດີໃນ **ການທົດລອງທາງຄລີນິກຢ່າງກ້ວາງຂວາງ.**

ຜູ້ທີ່ໄດ້ສັກຢາວັກຊີນແລ້ວແມ່ນໄດ້ຮັບການປົກປ້ອງຢ່າງສູງຕ້ານກັບພະຍາດ COVID-19.

ມີຫຼາຍຄົນທີ່ແຕກຕ່າງກັນໄປໄດ້ຮັບຢາວັກຊີນປ້ອງກັນພະຍາດ COVID-19 ທີ່ໄດ້ຮັບຜົນດີຄືກັນ, ລວມທັງຄົນຜິວດຳ, ຄົນເຊື້ອສາຍສະເປນ/ລາຕິນ, ຄົນພື້ນເມືອງ ແລະ ຄົນຜິວສີອື່ນໆ; ຄົນທີ່ມີບັນຫາສຸຂະພາບ ແລະ ຄົນທີ່ກຳລັງຖືພາ.

ມີຫຼາຍກວ່າ **157 ລ້ານຄົນທົ່ວສະຫະລັດ** ໄດ້ຮັບການສັກຢາວັກຊີນຄົບແລ້ວ ເມື່ອຕົ້ນມາຮອດວັນທີ 6 ກໍລະກົດ.

ບັນດາຢາວັກຊີນປ້ອງກັນພະຍາດ COVID-19 ແມ່ນປອດໄພ

ຄົນສ່ວນໃຫຍ່ມີການຕອບສະໜອງຈາກພູມຕ້ານທານ ຫຼື ມີຜົນຂ້າງຄຽງປານກາງເທົ່ານັ້ນ ເຊັ່ນ: ເຈັບແຂນ ຫຼື ເຈັບຫົວ ຈາກການສັກຢາວັກຊີນປ້ອງກັນພະຍາດ COVID-19.

ຫຼາຍກ່ວາໜຶ່ງລ້ານເຂັມຂອງຢາວັກຊີນປ້ອງກັນພະຍາດ COVID-19 ໄປຮັບການສັກໄປແລ້ວ ໃນລັດ Rhode Island, ເມື່ອມາຮອດວັນທີ 7 ກໍລະກົດ.

ຜົນຂ້າງຄຽງທີ່ຮ້າຍແຮງຈາກການສັກຢາວັກຊີນ COVID-19 ແມ່ນມີໜ້ອຍຫຼາຍ. ຄົນສ່ວນໜ້ອຍທີ່ໄດ້ລາຍງານວ່າມີເລືອດກ້າມເລັກນ້ອຍ ແລະ ຮຸນແຮງ ໜຶ່ງຫາສອງອາທິດຫຼັງຈາກໄດ້ຮັບຢາວັກຊີນ Johnson & Johnson - ໃນອັດຕາ **7 ເຫດການ ຕໍ່ 1 ລ້ານ ວັກຊີນ.** ໃນບັນດາແມ່ຍິງອາຍຸ 18 ຫາ 49 ປີ.

ໂອກາດຈະເຈັບໜັກຈາກການພະຍາດ COVID-19 ແມ່ນ ສູງກ່ວາ ໂອກາດທີ່ຈະມີຜົນຂ້າງຄຽງທີ່ຮ້າຍແຮງຈາກຢາວັກຊີນ.

ວັກຊີນບໍ່ສາມາດເຮັດໃຫ້ທ່ານເປັນພະຍາດ COVID-19 ຢາວັກຊີນບໍ່ມີຜົນກະທົບຕໍ່ຄວາມສາມາດໃນການຕັ້ງຄັນ ຫຼື ການມີລູກ.ບໍ່ມີ ຫຼັກຖານວ່າ ບັນດາວັກຊີນປ້ອງກັນພະຍາດ COVID-19 ມີຜົນກະທົບຕໍ່ການຈະເລີນພັນ. ວັກຊີນເຫຼົ່ານີ້ສະແດງໃຫ້ເຫັນວ່າ ມີຄວາມປອດໄພ ແລະ ມີປະສິດທິຜົນໃນເວລາກຳລັງຖືພາ. ພວກເຂົາ ບໍ່ສາມາດປ່ຽນແປງ DNA ຂອງທ່ານ. ເຖິງແມ່ນວ່າທ່ານຈະເຄີຍເປັນພະຍາດ COVID-19 ແລ້ວກໍ່ຕາມ, ທ່ານກໍ່ຍັງຄວນຈະສັກຢາວັກຊີນເພື່ອປ້ອງກັນຕົວເອງຈາກສາຍພັນອື່ນໆ.

"ນີ້ແມ່ນສຳຄັນສຳລັບ **ຊຸມຊົນຂອງພວກເຮົາ**ແລະ ນີ້ແມ່ນສຳຄັນສຳລັບ **ຊີວິດປະຈຸບັນຂອງພວກເຈົ້າ** ແລະ **ອານາຄົດຂອງພວກເຮົາ.** ພວກເຮົາຈະໂທຫາ, ພວກເຮົາຈະລົມກັນ, ພວກເຮົາຈະຮ້ອງຂໍ, ພວກເຮົາຈະອ້ອນວອນ — ແຕ່ສຳຄັນທີ່ສຸດ, ພວກເຮົາຕ້ອງການຢາກເຫັນທຸກຄົນ **ໄດ້ຮັບການສັກຢາວັກຊີນ.**" Pastor Howard Jenkins, Bethel AME Church, Providence

ເປັນຫຍັງຂ້າພະເຈົ້າຈຶ່ງຄວນໄດ້ຮັບການສັກຢາວັກຊີນປ້ອງກັນພະຍາດ COVID-19?

ມີຄົນໄດ້ຮັບການສັກຢາຫຼາຍຂຶ້ນ, ການແຜ່ລະບາດຂອງພະຍາດຈະສິ້ນສຸດໄວຂຶ້ນ. ຖ້າປະຊາຊົນໃນລັດ **Rhode Islanders** ທຸກຄົນໄດ້ຮັບການສັກຢາວັກຊີນເມື່ອຮອດເວລາຂອງພວກເຂົາ, ພວກເຮົາສາມາດກັບມາມີຊີວິດຢູ່ກັບຄອບຄົວ, ໝູ່ເພື່ອນ, ວຽກງານ, ໂຮງຮຽນ ແລະ ມີຄວາມມ່ວນຊື່ນ. **ການສັກຢາຂອງທ່ານເຮັດໃຫ້ພວກເຮົາໃກ້ຊິດກັນອີກບາດກ້າວໜຶ່ງ.**

ບັນດາຢາວັກຊີນປ້ອງກັນພະຍາດ COVID-19ແມ່ນອີງໃສ່ວິທະຍາສາດ ການຄົ້ນຄ້ວາ ແລະ ເຮັດວຽກເປັນເວລາຫຼາຍທົດສະວັດ

ບັນດານັກຄົ້ນຄ້ວາທົ່ວໂລກໄດ້ມາເຕົ້າໂຮມກັນເພື່ອສ້າງວັກຊີນປ້ອງກັນພະຍາດ COVID-19 ໃຫ້ໄວ ຍ່ອນວ່າມີຫຼາກຫຼາຍຊີວິດເກີນໄປທີ່ຕົກຢູ່ໃນຄວາມສ່ຽງ. ພວກເຂົາບໍ່ໄດ້ມອງຂ້າມຂັ້ນຕອນການສຶກສາ ແລະ ການທົດລອງບັນດາວັກຊີນປ້ອງກັນພະຍາດ COVID-19 ໃດໆເລີຍ.

ບໍ່ມີຜະລິດຕະພັນຈາກຊິ້ນໝູ, DNA ຫຼື ຈຸລັງຕົວອ່ອນໃນບັນດາຢາວັກຊີນ.

ທ່ານສາມາດເລືອກໄດ້ວ່າຢາວັກຊີນປ້ອງກັນພະຍາດ COVID-19 ຊະນິດໃດທີ່ທ່ານໄດ້ຮັບໃນເວລານັດໝາຍ. ເຂົ້າເບິ່ງ C19vaccineri.org ເພື່ອຮຽນຮູ້ເພີ່ມຕື່ມ.

ບັນດາຢາວັກຊີນປ້ອງກັນພະຍາດ COVID-19 ແມ່ນບໍ່ເສຍຄ່າສຳລັບທຸກຄົນໃນລັດ Rhode Island

ຢາວັກຊີນບໍ່ເສຍຄ່າຫຍັງເລີຍ. ທ່ານບໍ່ເປັນຕ້ອງມີປະກັນໄພ. ທ່ານບໍ່ຈຳເປັນຕ້ອງໃຫ້ຂໍ້ມູນກ່ຽວກັບສະຖານະພາບການເຂົ້າເມືອງ.

ການນັດໝາຍສັກຢາວັກຊີນແມ່ນມີໃຫ້ຢູ່ບໍລິເວນໃກ້ຄຽງທີ່ສຸດ. ເຂົ້າເບິ່ງ health.ri.gov/vaccinesites ເພື່ອຊອກຫາສະຖານທີ່ສັກຢາວັກຊີນປ້ອງກັນພະຍາດ COVID-19 ຢູ່ໃກ້ທ່ານ.

ມີຫຼາຍກວ່າ **180 ສະຖານທີ່** ເພື່ອໄປຮັບການສັກຢາວັກຊີນທົ່ວລັດ Rhode Island.

ທ່ານສາມາດ **ໄດ້ຮັບການຊ່ວຍເຫຼືອຊອກຫາຄົນນຳ,** ໄດ້ຮັບ **ການຂົນສົ່ງ,** ແລະ **ການນຳນັດເວລາ** ນັດໝາຍໃນຫຼາຍພາສາໂດຍການໂທຫາ **844-930-1779** ຫຼື **211**. ຖ້າທ່ານບໍ່ສາມາດອອກຈາກເຮືອນຂອງທ່ານ, ທ່ານສາມາດໃຫ້ຄົນອື່ນພາທ່ານໄປຫາບ່ອນຊັກຢາວັກຊີນໂດຍການເຂົ້າເບິ່ງ C19vaccineRI.org.

"ຂ້າພະເຈົ້າຄິດວ່າທ່ານກໍ່ມີ **ຄວາມຮັບຜິດຊອບຕໍ່ຕົວທ່ານເອງ** ແລະ ເພື່ອ **ຊຸມຊົນຂອງທ່ານ** ແລະ ເພື່ອ **ຄອບຄົວຂອງທ່ານ** ເພື່ອເຮັດການຄົ້ນຄວ້າຂອງທ່ານ ແລະ **ໄປສັກຢາວັກຊີນ.**"

Virginia L. Thimas, Member of Bethel AME Church, Providence

ບໍ່ເປັນຫຍັງຖ້າທ່ານຍັງມີຄຳຖາມເພີ່ມເຕີ່ມ. ລົມກັບຜູ້ໃຫ້ບໍລິການດ້ານສຸຂະພາບທີ່ເຊື່ອຖືໄດ້. ເຂົ້າເບິ່ງ **C19vaccineRI.org** ເພື່ອມຮຽນຮູ້ເພີ່ມ. ອີເມວ **RIDOH.COVID19Questions@health.ri.gov** ຫຼື ໂທ **401-222-8022** ສຳລັບຄຳຖາມກ່ຽວກັບພະຍາດ COVID-19.

ຟັງເພີ່ມເຕີມກ່ຽວກັບຢາວັກຊີນປ້ອງກັນພະຍາດ COVID-19 ຈາກຜູ້ນຳໃນຊຸມຊົນທີ່ **bit.ly/vaxRIcommunity**